# ກອງປະຊຸມ ຈັດຕັ້ງປະຕິບັດ ຂະບວນການໂຕະມົນ ແມ່ນເລັ່ງໃສ່ເພື່ອການພັດທະນາ ແກ່ ສປປ ລາວ

ລັດຖະບານ ແລະ ຄູ່ຮ່ວມພັດທະນາ ມີຄວາມມຸ້ງຫວັງໃນການ ສົ່ງເສີມ ຄວາມຄືບໜ້າ ໃນການພັດທະນາ ແຫ່ງຊາດ ໃນ ກອງປະຊຸມ ໂຕະມົນ ປະຈໍາປີ 2016.

ທີ່ ກະຊວງ ແຜນການແລະ ການລົງທຶນ , ນະຄອນຫລວງວຽງຈັນ, ທີ່ **8** ພະຈິກ 2016 ໄດ້ຈັດພິທີຖະແຫລງຂ່າວໃນການກະກຽມກອງປະຊຸມໂຕະມົນປະຈໍາປີ 2016 – ເຊິ່ງໃນວັນທີ່24-25 ພະຈິກ ລັດຖະບານ ສປປ ລາວ ແລະ ບັນດາຄູ່ຮ່ວມພັດທະນາ ຈະໄດ້ຈັດກອງປະຊຸມໂຕະມົນປະຈໍາປີ, ທີ່ຈະຈັດຂຶ້ນທີ່ ແຂວງ ວຽງຈັນ. ໃນການບັນລຸ ຜົນສໍາເລັດ ແລະ ສິ່ງທ້າທາຍ ແລະ ຮ່ວມກັນປຶກສາຫາລືກ່ຽວກັບ ບູລິມະສິດຂອງ ການພັດທະນາແຫ່ງຊາດ .

ກອງປະຊຸມ ຈັດຕັ້ງປະຕິບັດ ໂຕະມົນ ປະຈໍາປີ ແມ່ນສ່ວນໜຶ່ງ ຂອງ ຂະບວນການໂຕະມົນ ເຊິ່ງເປັນກົນໄກ ໜຶ່ງໃນການຊຸກຍູ້ການພັດທະນາ, ເຊິ່ງກອງປະຊຸມດັ່ງກ່າວຈັດຂຶ້ນເພື່ອຮ່ວມກັນຕົກລົງ ຕໍ່ບູລິມະສິດຂອງການພັດທະນາແລະຮ່ວມກັນສ້າງແຜນດໍາເນີນງານ. ໃນກົນໄກຂອງ ຂະບວນການໂຕະມົນ ກໍ່ຍັງມີ 10 ຫນ່ວຍງານຂະແຫນງການ SWGs ເພື່ອປະສານງານໃນການຈັດຕັ້ງປະຕິບັດແຜນດໍາເນີນງານນຂອງການພັດທະນາ. ເຊິ່ງໃນປີ 2016 ເປັນປີ ທໍາອິດ ຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ ສັງຄົມ ຄັ້ງທີ່ VIII ພ້ອມດ້ວຍ ວາລະຂອງການພັດທະນາສາກົນ ເຊັ່ນ ເປົ້າຫມາຍພັດທະນາແບບຍືນຍົງ ແມ່ນຫມາຍທີ່ສໍາຄັນຂອງການພັດທະນາ SDG.

ດັ່ງທີ່ ທ່ານ ປອ ກິແກ້ວ ຈັນທະບູຣີ, ຮອງລັດຖະມົນຕີ ກະຊວງ ແຜນການແລະ ການລົງທຶນ ໄດ້ເຫນັ້ນວ່າ: “10 ຫນ່ວຍງານຂະແຫນງການ SWG ແມ່ນກົນໄກຂອງຂະບວນການໂຕະມົນ ທີ່ສໍາຄັນໃນການສະຫນັບສະຫນູນ ລັດຖະບານ ແລະ ຄູ່ຮ່ວມພັດທະນາ ຮ່ວມກັນ ທົບທວນ ຄວາມຄືບຫນ້າ ໃນການສະຫນັບສະຫນູນໃນການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະ ກິດ-ສັງຄົມ ແຕ່ລະໄລຍະ ໃນລະດັບສູນກາງ ແລະທ້ອງຖິ່ນ.”

ພ້ອມດຽວກັນນີ້ ເພື່ອທົບທວນຄວາມຄືບຫນ້າດັ່ງກ່າວ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໂຕະມົນ ຈະໄດ້ມີການແລກປ່ຽນ ຄໍາຄິດເຫັນນໍາກັນ ຕໍ່ກັບບັນດານະໂຍບາຍ ແລະ ບູລິມະສິດຂອງການພັດທະນາໃນ ປີ 2017 ພ້ອມດ້ວຍ ທິດທາງໃນການປະສານງານກັນ ໃຫ້ມີຄວາມຮັບຜິດຊອບຮ່ວມກັນ, ການຄາດຄະເນ ແລະ ເລັ່ງໃສ່ ຜົນໄດ້ຮັບ. ເຊິ່ງຈະໄດ້ມີການ ສົນທະນາເປັນກຸ່ມໃນຫົວຂໍ້ ຕ່າງໆ ຂອງ ກັນພັດທະນາ ເຊັ່ນ: ການເຊື່ອມສານເອົາເປົ້າຫມາຍພັດທະນາແບບຍືນຍົງ ເຂົ້າໃນແຜນພັດທະນາ ແຫ່ງຊາດ ຂອງ ລັດຖະບານ, ການສ້າງແຜນດໍາເນີນງານ ຂອງ ຖະແຫລງການ ວ່າດ້ວຍ ປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ , ຄວາມຄືບຫນ້າໃນການຈັດຕັ້ງປະຕິບັດ ແຜນງານ ຂອງ ວຽກງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ແລະ ການເຕີບໂຕ ສີຂຽວ ການປັບຕົວ ຕໍ່ກັບການ ປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ.

ທ່ານ ນາງ ຄາລີນາ ອິມໂມເນັນ, ຜູ້ປະສານງານ ຂອງ ອົງການ ສະຫະປະຊາຊາດ, ຜູ້ຕ່າງຫນ້າ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ ປະຈໍາສປປ ລາວ ໄດ້ໃຫ້ຄໍາເຫັນວ່າ: “ໃນປີນີ້ ມີຫລາຍສິ່ງທີ່ ທີ່ ລັດຖະບານ ສປປ ລາວ ສາມາດບັນລຸໄດ້  ເຊັ່ນ: ຜົນສໍາເລັດ ຂອງ ກອງປະຊຸມ ອາຊຽນ ໃນ ເດືອນ ກັນຍາ ທີ່ ຜ່ານມາ ແລະ ຄວາມຄືບຫນ້າຂອງການພັດທະນາ ໃນການເຊື່ອມສານເອົາ ວາລະຂອງການພັດທະນາຂອງ ສາກົນ 2030 ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ່ VIII ເຊິ່ງໄດ້ຊີ້ໃຫ້ເຫັນ ການເປັນຄູ່ຮ່ວມທີ່ດີ ລະຫວ່າງ ລັດຖະບານ ແລະ ຄູ່ຮ່ວມພັດທະນາ ແມ່ນມີຄວາມເຂັ້ມແຂງ, ທີ່ຫລາກຫລາຍ   ແລະ ກ້ວາງ.”

ທ່ານ ນາງ ສິງຄໍາ ຄົງສະຫວັນ, ຮອງເຈົ້າແຂວງ ແຂວງ ວຽງຈັນໄດ້ກ່າວມີຄໍາເຫັນ “ ແຂວງ ວຽງຈັນ ແມ່ນກຽມພ້ອມ ຍິນດີຕອນຮັບ ບັນດາຜູ້ແທນທັງຫມົດ ຕໍ່ກອງປະຊຸມໂຕະມົນ ພ້ອມດ້ວຍການໃຫ້ ຄວາມຮ່ວມມືກັບການໃຫ້ຄວາມສະດວກ

ຕ່າງໆ ລວມທັງຫ້ອງປະຊຸມ, ທີ່ພັກ, ການກະກຽມໃຫ້ແກ່ການລົງຢ້ຽມຢາມໂຄງການດີເດັ່ນຕ່າງໆ ແລະ ການຕ້ອນຮັບອັນອົບອຸ່ນ ຈາກ ແຂວງ ວຽງຈັນ."

ຂໍ້ມູນເພີ້ມເຕີມ

- ບົດລາຍງານ ກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ່ 12th High Level Round Table Meeting: http://rtm.org.la/high-level-round-table-meeting-2015/
- ຖະແຫລງການວຽງຈັນ The Vientiane Partnership Declaration: http://rtm.org.la/the-vientiane-declaration-2015/
- ເອກະສານຫລັກຮັບໃຊ້ກອງປະຊຸມ ໂຕະມົນ Key documents for the Round Table Implementation: http://rtm.org.la/resources/key-documents/
- ເອກະສານເປົ້າຫມາຍພັດທະນາ ແບບຍືນຍົງ The Sustainable Development Goals: http://rtm.org.la/sustainable-development-goals/

**ຕິດຕໍ່ພົວພັນ**


- **ທ່ານ ມໍລະກົດ ວົງໄຊ, ຫົວຫນ້າພະແນກ ສປຊ, ກົມຮ່ວມມືສາກົນ, ກ/ຊ ແຜນການແລະການລົງທຶນ ໂທ**: 021-222214, Email: k_vongxay@hotmail.com
- **ນາງ** Ildiko Hamos-Sohlo, **ຊ່ຽວສານ ການດ້ານການສື່ສານ, ຫົວຫນ້າຫນ່ວຍງານ ຂໍ້ມູນຂ່າວສານ ຂອງ ອົງການ ສປຊ ເພື່ອການພັດທະນາ ໂທ**: 021 267 778, Email: ildiko.hamos@undp.org